ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 14 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 09 ເມສາ 2019

ສຳນັກງານ ຄຄຊ
ເລກທີ 0350
ວັນທີ 10 APR 2019
ໂທລະສັບ 021 217770

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ

## ປະຈຳອາທິດທີ 18-22/03/2019 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

**I. ວຽກງານການເມືອງແນວຄິດ**

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນແລະພາຍນອກເປັນຢ່າງດີ.

**II. ການເຄື່ອນໄຫວວຽກງານວິຊາສະເພາະ**

**1. ສະພາບເສດຖະກິດເງິນຕາສາກົນ**

**1.1 ອັດຕາແລກປ່ຽນສາກົນ**

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດແຂງຄ່າຂຶ້ນ 0,17% ທຽບໃສ່ເອີໂຣ ເນື່ອງຈາກເສດຖະກິດຂອງສະຫະລັດອາເມລິກາປັບຕົວດີຂຶ້ນ ເຫັນໄດ້ຈາກຕົວເລກຍອດຂາຍບ້ານໃໝ່ ເພີ່ມຂຶ້ນ 11,8% ໃນເດືອນ 2/2019 ຈາກ ຫຼຸດລົງ 1,2% ໃນເດືອນຜ່ານມາ. ພ້ອມນັ້ນ, ຈຳນວນປະຊາຊົນທີ່ຂໍສະຫວັດດີການຄັ້ງທຳອິດຫຼຸດລົງຢູ່ໃນລະດັບ 221.000 ຈາກຈຳນວນ 229.000 ຄົນ ໃນອາທິດທີ່ຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 08-14/03/2019 | ອາທິດນີ້ 15-21/03/2019 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1321 | 1.1302 | 0.17% |
| ເຢນ/ໂດລາ | 111,64 | 110.53 | 1.00% |
| ບາດ/ໂດລາ | 31,680 | 31.710 | -0.09% |
| ເປໂຊ/ໂດລາ | 52,69 | 52.51 | 0.23% |
| ຣູເປັຍ/ໂດລາ | 14.255,00 | 14,170.00 | 0.60% |
| ໂດລາສິງກະໂປ/ໂດລາ | 1,3538 | 1.3514 | 0.18% |
| ຢວນ/ໂດລາ | 6,7132 | 6.7152 | -0.03% |

1.2 ສະພາບລາຄານ້ຳມັນ ແລະຄຳໃນຕະຫຼາດໂລກ

- ລາຄານ້ຳມັນເພີ່ມຂຶ້ນ 2,79% ເປັນ 60,42 ໂດລາ/ບາເຣວ ເນື່ອງຈາກຄວາມຕ້ອງການຊົມໃຊ້ນ້ຳມັນເພີ່ມຂຶ້ນຊຶ່ງເຫັນໄດ້ຈາກຄັງສຳຮອງນ້ຳມັນດິບຂອງ ສະຫະລັດອາເມລິກາ ຫຼຸດລົງໃນລະດັບ 9,59 ລ້ານບາເຣວ ຈາກຫຼຸດລົງໃນລະດັບ 3,86 ລ້ານບາເຣວ ໃນອາທິດຜ່ານມາ;

- ລາຄາຄຳ ເພີ່ມຂຶ້ນ 0,72% ເປັນ 1.311,74 ໂດລາ/ອອນ ເນື່ອງຈາກເງິນໂດລາມີຄວາມຜັນຜວນ ເຮັດໃຫ້ນັກລົງທຶນຊື້ຄຳ ແລະ ເຮັດສັນຍາຊື້-ຂາຍຄຳ ເພື່ອປ້ອງກັນຄວາມສ່ຽງ.

## 2. ສະພາບການຊື້-ຂາຍອັດຕາແລກປ່ຽນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0.09% ແລະ ອ່ອນຄ່າລົງ 0,11% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບອ່ອນຄ່າລົງ 0,49% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 3,54% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 08-14/03/2019 | | | ອາທິດນີ້ 15-21/03/2019 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະນາຄານ[1] | | | | | | | | | | | | |
| ໂດລາ | 8.631,78 | 8.664,89 | 8.649,36 | 8,639.83 | 8,671.67 | 8,656.95 | -0.09% | -0.08% | -0.09% | -0.44% | -0.51% | -0.49% |
| ບາດ | 275,64 | 277,19 | 276,48 | 275.69 | 277.41 | 276.79 | -0.02% | -0.08% | -0.11% | -3.44% | -3.58% | -3.54% |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ເພີ່ມຂຶ້ນ 0,44% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ຖານເງິນຕາ ເພີ່ມຂຶ້ນ 15,72%.

- ປະລິມານເງິນ M2 ຫຼຸດລົງ 0,12% ທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 8,43%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (15-21/03/2019) ເຫັນວ່າ ທທກ ຂາຍເງິນໂດລາສຸດທິ 11,46 ລ້ານໂດລາ (ໃນນີ້ຊື້ເງິນໂດລາໄດ້ 17,57 ລ້ານໂດລາ ແລະ ຂາຍເງິນໂດລາໄດ້ 29,03 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 162,02 ລ້ານບາດ (ໃນນີ້ຊື້ເງິນບາດໄດ້ 228,41 ລ້ານບາດ ແລະ ຂາຍເງິນບາດໄດ້ 392,43 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດ ເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ ເງິນໂດລາຫຼຸດລົງ 2,90% ແຕ່ເງິນບາດເພີ່ມຂຶ້ນ 59,01%;

- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ດັດສົມ ໂດຍການຂາຍເງິນໂດລາສຸດທິທະນາຄານທຸລະກິດ ຈຳນວນ 2,56 ລ້ານໂດລາ ແລະ ຂາຍເງິນບາດສຸດທິ ຈຳນວນ 34,00 ລ້ານບາດ;

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 4,73 ລ້ານໂດລາ ແລະ ເງິນບາດ ຈຳນວນ 25,38 ລ້ານບາດ;

---

[1] % ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆ: ທຫລ ແມ່ນບໍ່ມີການເຄື່ອນໄຫວ.

**ສະພາບການຊື້-ຂາຍເງິນຕາຕ່າງປະເທດ** (ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 08-14/03/2019 | | ອາທິດນີ້ 15-21/03/2019 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **18,06** | **94,52** | **17.57** | **228.41** | **-2.71%** | **141.65%** |
| - ທ/ຄທຸລະກິດລັດ | 7,94 | 33,21 | 11.38 | 112.96 | 43.32% | 240.14% |
| - ທ/ຄທຸລະກິດອື່ນໆ | 10,12 | 61,31 | 6.19 | 115.45 | -38.83% | 88.31% |
| **2. ການຂາຍເງິນຕາຕ່າງປະເທດ** | **29,93** | **295,93** | **29.03** | **392.43** | **-3.01%** | **32.61%** |
| - ທ/ຄທຸລະກິດລັດ | 8,97 | 120,66 | 12.72 | 165.17 | 41.81% | 36.89% |
| - ທ/ຄທຸລະກິດອື່ນໆ | 20,96 | 175,27 | 16.31 | 227.26 | -22.19% | 29.66% |
| **ຊື້-ຂາຍສຸດທິ ທທກ** | **-11,87** | **-201,41** | **-11.46** | **-162.02** | **-3.45%** | **-18.56%** |
| - ຜົດດ່ຽງຊື້-ຂາຍ | -65,73% | -213,09% | -65.22% | -71.81% | -0.77% | -66.30% |
| - ມູນຄ່າການຊື້-ຂາຍ | **47.99** | **390,45** | **46.60** | **620.84** | **-2.90%** | **59.01%** |
| **3. ການຊື້-ຂາຍລະຫວ່າງ ທຫລກັບ ທທກ** | **-1,30** | **-25,90** | **-2.56** | **-34.00** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 1.40 | 0.00 | | |
| - ທຫລ ຂາຍໃຫ້ ທທກ | 1,30 | 25,90 | 3.96 | 34.00 | | |
| **4. ຊື້-ຂາຍລະຫວ່າງ ທທກ ດ້ວຍກັນ** | **5,01** | **27,86** | **4.73** | **25.38** | | |
| **5. ທຫລ ກັບ ພາກສ່ວນອື່ນໆ** | **0,00** | **0,00** | **0,00** | **0,00** | | |
| -ທຫລ ຊື້ ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລ ຂາຍ ໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ໃນເດືອນ 03/2019 ຄາດວ່າຈະຢູ່ໃນລະດັບ 1,64%.

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ

ທະນາຄານແຫ່ງ ສປປລາວ ໄດ້ມີກະແສເງິນໄຫຼເຂົ້າສຸດທິ ຜ່ານລະບົບທະນາຄານ ຈຳນວນ 27,02 ລ້ານໂດລາສະຫະລັດ. ໃນນັ້ນ, ປະຈຳອາທິດວັນທີ (15-21/03/2019) ກະແສເງິນໄຫຼເຂົ້າມີຈຳນວນ 158,96 ລ້ານໂດລາສະຫະລັດ (ຊຶ່ງສ່ວນໃຫຍ່ແມ່ນຮັບຈາກການສົ່ງອອກສິນຄ້າຈຳນວນ 69,45 ລ້ານໂດລາສະຫະລັດ, ຈາກການກູ້ຢືມຕ່າງປະເທດຈຳນວນ 51,54 ລ້ານໂດລາສະຫະລັດ ແລະ ຮັບຈາກການໃຫ້ບໍລິການຈຳນວນ15,21 ລ້ານໂດລາສະຫະລັດ). ກະແສເງິນໄຫຼອອກ ມີຈຳນວນ 131,94 ລ້ານໂດລາສະຫະລັດ (ຊຶ່ງສ່ວນໃຫຍ່ແມ່ນຊຳລະຄ່ານຳເຂົ້າສິນຄ້າ ຈຳນວນ 80,81 ລ້ານໂດລາສະຫະລັດ, ຊຳລະຄ່າບໍລິການ ຈຳນວນ 20,79 ລ້ານໂດລາສະຫະລັດ ແລະ ຊຳລະເງິນກູ້ພາກລັດຖະບານ ຈຳນວນ 17,76 ລ້ານໂດລາສະຫະລັດ).

## 3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງສປປລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 718 ສະບັບທຽບໃສ່ອາທິດຜ່ານມາເພີ່ມຂຶ້ນ 262 ສະບັບ, ລວມມູນຄ່າໂອນທັງໝົດ 580,13 ຕື້ກີບ, ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 325,18 ຕື້ກີບ ເທົ່າກັບ 127,55%.

- ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (15-21/03/2019) ມີທັງໝົດ 4.647 ຄັ້ງ ຊຶ່ງເປັນສະກຸນເງິນກີບທັງໝົດ. ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເພີ່ມຂຶ້ນ ຈຳນວນ

ຈຳນວນ 399 ຄັ້ງ ຊຶ່ງມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ເພີ່ມຂຶ້ນ ຈຳນວນ 340,80 ຕື້ກີບຈາກ 15,43 ຕື້ກີບມາເປັນ 356,24 ຕື້ກີບເທົ່າກັບ 2208,08%.

4. **ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ**

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ ປິດຢູ່ທີ່ 834,21 ຈຸດ ເພີ່ມຂຶ້ນ ຈາກ 823,23 ຈຸດ ຫຼື ເທົ່າກັບ 1,33% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 499.800 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 2,73 ຕື້ກີບ ເພີ່ມຂຶ້ນ 575,27% ເມື່ອທຽບໃສ່ອາທິດຜ່ານມາ, ໃນນັ້ນເປັນການຊື້-ຂາຍຮຸ້ນຂອງຜູ້ລົງທຶນຕ່າງປະເທດ 34,83% ສາເຫດການເພີ່ມຂຶ້ນຂອງດັດຊະນີ ຕລຊລ ແມ່ນມາຈາກການປັບຕົວເພີ່ມຂຶ້ນຂອງລາຄາຮຸ້ນ BCEL ເນື່ອງຈາກຈະມີການແບ່ງປັນເງິນປັນຜົນປະຈຳ 6 ເດືອນທ້າຍປີ 2018 ເຮັດໃຫ້ຜູ້ລົງທຶນຕ້ອງການຊື້ຮຸ້ນຂອງ BCEL ເພີ່ມຂຶ້ນ.

**ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)**

| ບໍລິສັດ | ອາທິດນີ້ (11-15/03/2019) | | | ອາທິດນີ້ (15-21/03/2019) | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ | ມູນຄ່າການຊື້-ຂາຍ | ລາຄາປ່ຽນແປງ (%) |
| **BCEL** | 62.700 | 376.740.000 | 6.200 | **314.100** | **2.043.750.000** | **6.850** | **400,96** | **442,48** | **10,48** |
| **EDL-GEN** | 6.900 | 26.998.000 | 3.950 | **152.300** | **597.285.000** | **3.930** | **2.107,25** | **2.112,33** | **-0,51** |
| **LWPC** | - | - | 7.150 | - | - | **7.150** | - | - | - |
| **PTL** | 200 | 230.000 | 1.150 | - | - | **1.150** | **-100** | **-100** | - |
| **SVN** | - | - | 2.000 | **100** | **220.000** | **2.200** | - | - | **10,00** |
| **PCD** | 1.100 | 1.108.000 | 1.080 | - | - | **1.080** | **-100** | **-100** | - |
| **LCC** | - | - | 2.270 | - | - | **2.200** | - | - | **-3,08** |
| **MHTL** | - | - | 2.950 | **33.300** | **94.095.000** | **2.900** | - | - | **-1,69** |
| **LAT** | - | - | 725 | - | - | **725** | - | - | - |
| ທັງໝົດ | 70.900 | 405.076.000 | | **499.800** | **2.735.350.000** | | **604,94** | **575,27** | |

5. **ວຽກງານອື່ນໆທີ່ພົ້ນເດັ່ນ.**

- **ສຳເລັດການເຂົ້າຮ່ວມກອງປະຊຸມ:**❶ກອງປະຊຸມລັດຖະບານສະໄໝສາມັນ ປະຈຳເດືອນ ມີນາ 2019; ❷ກອງປະຊຸມປຶກສາຫາລືໃນການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 7 ສະໄໝທີ X ແລະ ❸ເຂົ້າຮ່ວມງານວາງພວງມະລາ ແລະ ກະຕ່າດອກໄມ້ ເນື່ອງໃນໂອກາດສະເຫຼີມສະຫຼອງວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ 64 ປີ.
- **ສຳເລັດການຈັດກອງປະຊຸມ, ສຳມະນາ ແລະ ພິທີຕ່າງໆ:**❶ກອງປະຊຸມສະພາບໍລິຫານຂອງສຳນັກງານປົກປ້ອງເງິນຝາກ (ສປງ) ❷ກອງປະຊຸມຄົ້ນຄວ້າຮ່າງຂໍ້ຕົກລົງວ່າດ້ວຍລະບົບຊຳລະຍ່ອຍ ❸ກອງປະຊຸມຄົ້ນຄວ້າວຽກງານປັບປຸງ

ໂຄງສ້າງ ທະນາຄານນະໂຍບາຍ; ❹ກອງປະຊຸມຄົ້ນຄວ້າປັບປຸງຮ່າງກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ); ❺ຈັດຝຶກອົບຮົມກ່ຽວກັບການນຳໃຊ້ເຄື່ອງຈັກຕັດຊ້ອຍທຳລາຍທະນະບັດເຊື່ອມຄຸນນະພາບ.

- **ສຳເລັດວຽກງານວິຊາສະເພາະ:**❶ສຳເລັດການຜ່ານຮ່າງດຳລັດວ່າດ້ວຍວຽກງານຂໍ້ມູນຂ່າວສານສິນເຊື່ອ ຕໍ່ກອງປະຊຸມລັດຖະບານ; ❷ສຳເລັດການລົງກວດກາປະຈຳປີ 2018 ຂອງ ສະຖາບັນເສດຖະກິດການເງິນຄື: ວັງວຽງ, ສະຖາບັນເສດຖະກິດການເງິນ ມິດຕະພາບ ແລະ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ນິວຄອນເຊັບ ແລະ ❸ສຳເລັດແຈ້ງການຕໍ່ມອບຊິບກ່ຽວກັບການແຈ້ງລາຍຊື່ ທະນາຄານທຸລະກິດ, ສະຖາບັນການເງິນ ແລະ ນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດໃຫ້ບໍລິການຮັບຊຳລະຄ່າສິນຄ້າ ທີ່ໄດ້ຮັບອະນຸຍາດໃຫ້ບໍລິການຮັບຊຳລະຄ່າສິນຄ້າ ແລະ ບໍລິການຜ່ານທາງເອເລັກໂຕຣນິກຢູ່ ສປປ ລາວ.

**III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>**

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ;
- ສືບຕໍ່ຕິດຕາມ, ກວດກາການເຄື່ອນໄຫວຂອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ໄດ້ຮັບອະນຸຍາດຈາກ ທຫລ ພ້ອມທັງສືບຕໍ່ຮ່ວມເປັນຄະນະສະເພາະກິດລົງກວດກາການເຄື່ອນໄຫວຮ້ານແລກປ່ຽນເງິນຕາ ຢ່າງໃກ້ຊິດ;
- **ກະກຽມການເຂົ້າຮ່ວມກອງປະຊຸມ:** ກອງປະຊຸມກ່ຽວກັບວຽກງານການເກັບພາສີທີ່ດິນຜ່ານລະບົບທະນາຄານ ແລະ ເອກະສານທີ່ດິນທີ່ນຳໄປຄ້ຳປະກັນນຳບັນດາ ທະນາຄານເອກະຊົນ ແລະ ສະຖາບັນການເງິນໃນຂອບເຂດທົ່ວປະເທດ.
- **ກະກຽມການຈັດກອງປະຊຸມ, ສຳມະນາ ແລະ ພິທີຕ່າງໆ:**❶ກອງປະຊຸມຄະນະກຳມະການຄຸ້ມຄອງຫຼັກຊັບຄັ້ງທີ I ປະຈຳປີ 2019❷ກອງປະຊຸມເຜີຍແຜ່ວຽກການພັດທະນາແບບຍືນຍົງຢູ່ ສປປ ລາວ ພາຍໃນຂະແໜງການທະນາຄານ (SDG); ❸ກອງປະຊຸມເຜີຍແຜ່ກອງປະຊຸມເຜີຍແຜ່ຜົນກອງປະຊຸມຄະນະກຳມະການລະດັບສູງການເຊື່ອມໂຍງຂະແໜງການເງິນອາຊຽນ (SLC); ❹ ກອງປະຊຸມປັບປຸງກົດໝາຍວ່າດ້ວຍທະນາຄານທຸລະກິດ ແລະ ຮ່າງດຳລັດຂໍ້ມູນຂ່າວສານສິນເຊື່ອ (CIB);❺ກອງປະຊຸມປັບປຸງຮ່າງດຳລັດວ່າດ້ວຍການເຊົ່າສິນເຊື່ອ; ❻ກອງປະຊຸມວຽກຮ່າງຂໍ້ຕົກລົງວ່າດ້ວຍລະບົບການຊຳລະຍ່ອຍ ແລະ ❼ພິທີມອບ-ຮັບໃບຍ້ອງຍໍເພີ່ມເຕີມ ເນື່ອງໃນໂອກາດສະເຫຼີມສະຫຼອງວັນສ້າງຕັ້ງ ທຫລ ຄົບຮອບ 50 ປີໃຫ້ ທທກ ທະນາຄານທຸລະກິດ ແລະ ສະຖາບັນການເງິນ.

**ເຊັນແທນຫົວໜ້າຫ້ອງການ**

**ຮອງຫົວໜ້າຫ້ອງການ**

ທະນາຄານແຫ່ງ ສປປ ລາວ ຫ້ອງການ

**ພູມມະລີ ສີຣິພົນເດດ**